**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ

# ໜັງສືເຊີນ

**ຮຽນ:** ......................................................................................................

**ເລື່ອງ:** ເຂົ້າຮ່ວມກອງປະຊຸມຝຶກອົບຮົມການນຳໃຊ້ເວບໄຊຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍ ວ່າດ້ວຍ ຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012.
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021.
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 3360/ຄຊລ, ລົງວັນທີ 25 ຕຸລາ 2022.

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມຝຶກອົບຮົມການນຳໃຊ້ເວບໄຊຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເພື່ອເຮັດໃຫ້ໜ່ວຍງານຈັດຊື້-ຈັດຈ້າງຢູ່ກະຊວງຂອງທ່ານນຳ ໃຊ້ໃຫ້ມີປະສິດທິຜົນສູງສຸດ. ເປົ້າໝາຍເຂົ້າຮ່ວມແມ່ນຕາງໜ້າຈາກບັນດາກະຊວງ ທີ່ໄດ້ສົ່ງລາຍຊື່ມາໃຫ້ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນຜ່ານມາ ແລະ ກ່ອນເຂົ້າຝຶກອົບຮົມສະເໜີໃຫ້ບັນດາທ່ານ ກະກຽມແຜນການຈັດຊື້-ຈັດຈ້າງປະຈຳປີ 2020 ແລະ 2021 (ຖ້າມີທັງ 2 ປີ), ໜັງສືແຈ້ງເຊີນປະມູນ ຂ່າວກົດຈະກຳ ແລະ ອື່ນໆ ເພື່ອປະກອບເຂົ້າໃນການຝຶກອັບໂຫຼດເອກະສານລົງເວບໄຊ.

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 01 ພະຈິກ 2022; ເວລາ: 08:30ໂມງ ໂດຍຜ່ານກອງປະຊຸມທາງໄກ (Video Conference). ລິ້ງປະຊຸມແມ່ນຈະແຈ້ງໃຫ້ຊາບຕາມພາຍຫຼັງ.

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານ ເຂົ້າຮ່ວມກອງປະຊຸມຕາມ ວັນ ແລະ ເວລາ ດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ຕິດຕໍ່ພົວພັນກົມຄຸ້ມຄອງຊັບສິນແຫ່ງລັດ:
020 52979966 ນາງ ນິດຕະຢາ ອ່ອນຕາ
020 59994199 ທ່ານ ພອງສະວັນ ລິດຖິ່ນໄຊ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມຄຸ້ມຄອງຊັບສິນແຫ່ງລັດ ເລກທີ /ຄຊລ

ນະຄອນຫຼວງວຽງຈັນ, ວັນທີ

# ໜັງສືສະເໜີ

**ຮຽນ:** ທ່ານ ຫົວໜ້າຫ້ອງການກະຊວງການເງິນ ທີ່ນັບຖື.

**ເລື່ອງ:** ຂໍອະນຸມັດລາຍເຊັນໃສ່ "ຮ່າງ" ໜັງສືເຊີນ ເຂົ້າຮ່ວມປະຊຸມຝຶກອົບຮົມການນຳໃຊ້ເວບໄຊຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍ ວ່າດ້ວຍ ຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012.
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອງໄຫວ ຂອງກົມຄຸ້ມຄອງຊັບສິນແຫ່ງລັດ.
- ອີງຕາມ ການຕົກລົງເຫັນດີຂອງພະແນກຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ລາຄາ ແລະ ທີມງານຈາກທະນາຄານໂລກ (WB) ຄັ້ງວັນທີ 17 ຕຸລາ 2022.

ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອເຊັນຮ່າງ ໜັງສືເຊີນຕາງໜ້າບັນດາກະຊວງ ເພື່ອເຂົ້າຮ່ວມກອງປະຊຸມຝຶກອົບຮົມການນຳໃຊ້ເວບໄຊຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໃຫ້ໜ່ວຍງານຈັດຊື້-ຈັດຈ້າງຂັ້ນສູນກາງນຳໃຊ້ໃຫ້ມີປະສິດທິຜົນສູງສຸດ.

ດັ່ງນັ້ນ, ຈິ່ງຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດລາຍເຊັນຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

**ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ**